## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 21 ພຶສພາ 2023 (05-21-2023)

---

## ພະລັງໃນການຢືນຕໍ່ສູ້ການທົດລອງ

*ເມື່ອໃດທ່ານຮູ້ສຶກມີຄວາມພ້ອມຢ່າງເຕັມທີ່ສຳລັບວຽກງານ?*

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າຈັດຕຽມພວກເຮົາໃຫ້ຢືນພື້ນທີ່ຂອງເຮົາຕໍ່ຕ້ານກັບການລໍ້ລວງໃຈ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ໃນລະຫວ່າງເດືອນທີ່ຍຸດສົງຄາມໂລກຄັ້ງທີສອງ, ນາຊີ ເຢັຽຣະມັນກາຍເປັນຜູ້ສິ້ນຫວັງຢ່າງໃຫຍ່ ຊຶ່ງເຂົາໄດ້ກໍ່ຕັ້ງກອງທັບປະຊາຊົນ (Volkssturm). ນີ້ບໍ່ແມ່ນພາກນຶ່ງຂອງກອງທັບເດີມ, ແຕ່ແມ່ນການພະຍາຍາມກະຕຸ້ນຈຳນວນຂອງທະຫານດ້ວຍການສມັກຜູ້ຊາຍອາຍຸ 16-60 ປີ ລຸກຂຶ້ນແລະຕໍ່ສູ້. ບໍ່ມີກຳນົດ/ເວລາທີ່ແນ່ນອນໃນການຝຶກຄົນເຫຼົ່ານີ້. ຍ້ອນການສູ້ຮົບຍືດເຍື້ອແລະການຂາດແຄນອາວຸດ, ທະຫານທີ່ບໍ່ໄດ້ຝຶກແອບເຫຼົ່ານີ້ມັກສາມາດພຽງແຕ່ທຳຄວາມຄຸ້ນເຄີຍກັບອາວຸດດ້ວຍຕົວເອງເວລາປະເຊີນໜ້າກັບສັດຕຣູຕົວຈິງ.

ຜູ້ທີ່ເຄີຍໄດ້ຮັບໃຊ້ໃນກອງທັບສາມາດຢັ້ງຢືນຕໍ່ຄວາມສຳຄັນການຝຶກແອບແລະຖືກປະກອບອາວຸດຢ່າງຖືກຕ້ອງ. ການຮູ້ຈັກປະເຊີນໜ້າກັບສັດຕູຢ່າງຖືກຕ້ອງເປັນເງື່ອນໄຂສຳຄັນຕໍ່ໄຊຊນະ. ຊີວິດຂອງຄຣິສະຕຽນແມ່ນການຕໍ່ສູ້. ໃນເອເຟໂຊ 6:10-18, ອັຄສາວົກໂປໂລໄດ້ຊີ້ໃຫ້ເຫັນຍຸທພັນທີ່ພຣະເຈົ້າຈັດໄວ້ໃຫ້ລູກຂອງພຣະອົງ. ປຽບດັ່ງນາຍພົນຜູ້ມີປະສົບການ, ໂປໂລ ໄດ້ຊີ້ໃສ່ອາວຸດຝ່າຍວິນຍານທີ່ພຣະເຈົ້າໄດ້ຈັດໄວ້ສຳລັບການສູ້ຮົບຝ່າຍວິນຍານທີ່ເຮົາປະເຊີນ. ສັດຕຣູຂອງເຮົາ, ຊີຕານ, ເປັນສັດຕຣູທີ່ໂຫດຫ້ຽມ, ແຕ່ໃນພຣະຄຣິດ, ໄຊຊນະຂອງເຮົາໄດ້ແນ່ນອນ. ການຕໍ່ສູ້ການທົດລອງໝາຍຄວາມວ່າເຮົາຕ້ອງເປັນຄົນເຂັ້ມແຂງ, ແທດເໝາະ, ແລະໝັ້ນຄົງ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ເອເຟໂຊ 6:10-13.</u>

*10 ສຸດທ້າຍນີ້, ຂໍພວກທ່ານຈົ່ງມີກຳລັງເພີ່ມຂຶ້ນໃນອົງພຣະຜູ້ເປັນເຈົ້າແລະໃນຣິດເດດອັນແກ່ກ້າຂອງພຣະອົງ. 11 ຈົ່ງສວມຍຸທພັນຄົບ*
*ຊຸດຊຶ່ງມາຈາກພຣະເຈົ້າ ເພື່ອທ່ານທັງຫລາຍຈະສາມາດຢືນຕໍ່ສູ້ກັບກົນອຸບາຍຂອງພຍາມານໄດ້. 12 ເພາະວ່າ ເຮົາທັງຫລາຍບໍ່ໄດ້ຕໍ່ສູ້-*
*ກັບມະນຸດທັມມະດາ ແຕ່ຕໍ່ສູ້ກັບຜູ້ປົກຄອງ, ຜູ້ມີອຳນາດ, ເຈົ້າໂລກທີ່ຢູ່ໃນໂມຫະຄວາມມືດແຫ່ງໂລກນີ້ ແລະຕໍ່ສູ້ກັບກຳລັງວິນຍານ*
*ຝ່າຍຄວາມຊົ່ວຮ້າຍໃນອາກາດສະຖານ. 13 ເຫດສັນນັ້ນຈົ່ງຮັບເອົາຍຸທພັນຄົບຊຸດຊຶ່ງມາຈາກພຣະເຈົ້າ ເພື່ອທ່ານທັງຫລາຍຈະສາມາດ-*
*ຕໍ່ຕ້ານໃນວັນຊົ່ວຮ້າຍນັ້ນແລະເມື່ອເຮັດແລ້ວຈະຢູ່ຢ່າງໝັ້ນຄົງໄດ້.*

ຍ້ອນພວກເຮົາມີແນວໂນ້ມມັກຄວາມສະດວກແລະສະບາຍ, ພວກເຮົາຕ້ອງເຕືອນຕົວເອງສເມີວ່າຊີວິດຄຣິສະຕຽນແມ່ນສົງຄາມຝ່າຍວິນຍານ. ແຕ່ຂ່າວດີແມ່ນວ່າພວກເຮົາບໍ່ຕໍ່ສູ້ດ້ວຍກຳລັງຂອງເຮົາເອງ. ດ້ວຍເຫດນີ້, ກ່ອນທີ່ທ່ານໂປໂລຈະກ່າວສິ່ງອື່ນກ່ຽວກັບສົງຄາມຝ່າຍວິນຍານ, ເພິ່ນໄດ້ເຕືອນຊາວເອເຟໂຊ *"ຂໍພວກທ່ານຈົ່ງມີກຳລັງເພີ່ມຂຶ້ນໃນອົງພຣະຜູ້ເປັນເຈົ້າແລະ<u>ຣິດເດດ</u>ອັນແກ່ກ້າຂອງພຣະອົງ"(ຂໍ້10).* ທ່ານໂປໂລໄດ້ກ່າວເຣື່ອງນີ້ໃນທຳນອງຖືກກະທຳ,

ໝາຍຄວາມວ່າເຮົາບໍ່ໄດ້ເຮັດດ້ວຍກຳລັງເຮົາເອງ, ແຕ່ ອົງພຣະຜູ້ເປັນເຈົ້າເປັນຜູ້ກະທຳເພື່ອເຮົາ. ແລະຣິດທານຸພາບຈັ່ງແມ່ນພິລຶກ! "ຣິດທານຸພາບຂອງພຣະອົງ" ແມ່ນຣິດເດດອັນດຽວກັນກັບຣິດເດດທີ່ເຮົາໄດ້ເຫັນກ່ອນນີ້ໃນພຣະທັມເອເຟໂຊ. "[19]ແລະຮູ້ວ່າຣິດອຳນາດອັນໃຫຍ່ເຫລືອປະມານຂອງພຣະອົງມີຫລາຍພຽງໃດ" ສຳລັບພວກເຮົາທີ່ເຊື່ອ ຕາມອຳນາດຂອງພຣະກຳລັງແລະຣິດທານຸພາບອັນ-ຍິ່ງໃຫຍ່ຫລວງຂອງພຣະອົງ. [20] ຊຶ່ງພຣະອົງໄດ້ຊົງກະທຳ "ໃນອົງພຣະຄຣິດເມື່ອຊົງບັນດານໃຫ້ພຣະອົງຄືນພຣະຊົນແລະຊົງໃຫ້ປະທັບເບື້ອງຂວາພຣະຫັດຂອງພຣະເຈົ້າໃນສວັນສະຖານ"(ອຟຊ 1:19-20). ຣິດເດດອັນດຽວກັບພຣະເຈົ້າໄດ້ບັນດານໃຫ້ພຣະເຢຊູເປັນຄືນມາຈາກຕາຍຊົມຢູ່ໃນຊີວິດເຮົາເພື່ອຊ່ວຍພວກເຮົາໃຫ້ຢືນຢູ່ຢ່າງເຂັ້ມແຂງ.

ພຣະເຈົ້າເສີມກຳລັງເຮົາເມື່ອເຮົາໃຊ້ຍຸທພັນທີ່ພຣະອົງຈັດໃຫ້ແລ້ວ: "ຍຸທພັນຄົບຊຸດຂອງພຣະເຈົ້າ." ພວກເຮົາບໍ່ໄດ້ສວມຍຸທພັນເຮົາເອງ ຫຼືພະຍາຍາມຕໍ່ສູ້ສັດຕຣູດ້ວຍອຸປກອນຂອງເຮົາເອງ. ພວກເຮົາສວມຍຸທພັນທີ່ກະສັດຂອງກະສັດສວມໃຫ້ ເພື່ອປ້ອງກັນໄພ່ພົນຂອງພຣະອົງແລະລົງໂທດສັດຕຣູຂອງພຣະອົງ. "[16] ພຣະອົງເຫັນວ່າບໍ່ມີຄົນໃດເລີຍຊົງປລາດພຣະທັຍທີ່ບໍ່ມີໃຜອ້ອນວອນເພື່ອເຫດ-ສັນນັ້ນ ພຣະກອນຂອງພຣະອົງເອງ ກໍນຳຄວາມພົ້ນມາສູ່ພຣະອົງແລະຄວາມຊອບທັມຂອງພຣະອົງຍົກພຣະອົງໄວ້. [17] ພຣະອົງສວມຄວາມຊອບທັມເປັນເຄື່ອງເກາະແລະໝວກແຫ່ງຄວາມພົ້ນຢູ່ເໜືອພຣະສຽນຂອງພຣະອົງພຣະອົງນຸ່ງເສື້ອຜ້າແຫ່ງການແກ້ແຄ້ນປົກພຣະກາຍ ແລະເອົາຄວາມກະຕືລືລົ້ນຫົ່ມພຣະອົງ (ອຊຢ 59:16-17).

*ທ່ານໄດ້ຮັບການສອນຫຍັງກ່ຽວກັບສົງຄາມຝ່າຍວິນຍານ?*

ພວກເຮົາຕ້ອງການຍຸທພັນນີ້ຍ້ອນວ່າ, ໂດຍປາສຈາກມັນ, ພວກເຮົາບໍ່ສາມາດ"ຕໍ່ສູ້ກົນອຸບາຍຂອງມານໄດ້." ຈົ່ງບັນທຶກໄວ້: ນີ້ບໍ່ແມ່ນສົງຄາມທາງກາຍ, ແຕ່ແມ່ນສົງຄາມຝ່າຍວິນຍານ. ກ່ອນອື່ນໝົດສັດຕຣູຂອງເຮົາແມ່ນມານຮ້າຍ.

ເມື່ອເຮົາຄິດກ່ຽວກັບສົງຄາມຝ່າຍວິນຍານ, ພວກເຮົາບໍ່ຄິດກ່ຽວກັບສິ່ງຂອງປະເພດທີ່ເກີດຂຶ້ນໃນນິຍາຍ ຫຼືພາບພະຍົນສຍົດສຍອງ. ການຕໍ່ສູ້ຂອງເຮົາແມ່ນສົງຄາມແແຕ່ລະວັນ ພວກເຮົາເອີ້ນວ່າຊີວິດປະຈຳວັນຂອງຄຣິສະຕຽນ. ແຕ່ລະວັນພວກເຮົາຕໍ່ສູ້ກີ່ຄັ້ງ "ຕໍ່ສູ້ກັບໄຟ" ຕ້ານຍັນກັບສັດຕູທີ່ແທ້ຈິງແລະໂຫດຮ້າຍ ຜູ້ຫວັງທຳລາຍເຮົາໂດຍການລໍ້ລວງ ແລະດ້ວຍການທົດລອງ. ດ້ວຍເຫດຜົນນີ້, ພວກເຮົາຕ້ອງຕຽມຕົວໃຫ້ພ້ອມເພື່ອສົງຄາມ, ບໍ່ແມ່ນດ້ວຍກຳລັງຂອງເຮົາ, ດ້ວຍພຣະກຳລັງຂອງອົງພຣະຜູ້ເປັນເຈົ້າ, ຜູ້ຊຶ່ງໄດ້ຮັບໄຊຊນະມາແລ້ວ. ພຣະອົງໄດ້ນັ່ງບັນລັງແລ້ວ, ຊົງປົກຄອງເໜືອວິນຍານຊົ່ວຮ້າຍໃນອາກາດສະຖານເຫຼົ່ານີ້. ພວກເຮົາຕໍ່ສູ້ສົງຄາມແຕ່ລະວັນດ້ວຍການສວມຍຸທພັນທີ່ພຣະເຈົ້າປະທານໃຫ້.

*ພວກທ່ານພົບການທ້າທາຍຫຍັງກ່ຽວກັບການຢືນຢັດຕໍ່ສູ້ການທົດລອງ?*

## 2. <u>ເອເຟໂຊ 6:14-16</u>.

*[14]ເຫດສັນນັ້ນ ທ່ານທັງຫຼາຍຈົ່ງຢືນໝັ້ນເອົາຄວາມຈິງຄາດແອວໄວ້ເອົາຄວາມຊອບທັມເປັນເຄື່ອງປ້ອງກັນເອິກໄວ້. [15]ແລະເອົາຄວາມ-ພັ່ງພ້ອມຝ່າຍຂ່າວປະເສີດເຣື່ອງສັນຕິສຸກມາສຸບໃສ່ຕີນ. [16]ແລະພ້ອມກັບສິ່ງທັງໝົດນີ້, ຈົ່ງຍົກເອົາຄວາມເຊື່ອເປັນເຂນ ດ້ວຍເຂນນັ້ນ ທ່ານທັງຫຼາຍຈະສາມາດດັບລູກສອນໄຟທັງໝົດຂອງຜູ້ຮ້າຍນັ້ນໃຫ້ດັບມອດເສັຽ.*

ໜ້າສົນໃຈວ່າໃນຕອນນີ້ກ່ຽວກັບສົງຄາມຝ່າຍວິນຍານທີ່ພວກເຮົາຮຽນນີ້, ພວກເຮົາບໍ່ໄດ້ຖືກເອີ້ນໃຫ້ເອົາຊນະສັດຕູ, ພຣະເຢຊູໄດ້ຊນະແລ້ວ. ພວກເຮົາຖືກເອີ້ນໃຫ້ຕັ້ງໝັ້ນຢູ່ ບໍ່ໃຫ້ເສັຽທີ່ໝັ້ນໃຫ້ມັນ. ພວກເຮົາສາມາດຕັ້ງໝັ້ນຢູ່ເມື່ອພວກເຮົາສວມຍຸທພັນທີ່ພຣະເຈົ້າຈັດໃຫ້.

- **ເອົາຄວາມຈິງຄາດແອວໄວ້.** ພວກເຮົາຕໍ່ຕ້ານກົນອຸບາຍຂອງມານໂດຍການຄາດແອວດ້ວຍຄວາມຈິງຂອງພຣະທັມຂ່າວປະເສີດ.
- **ເອົາຄວາມຊອບທັມປ້ອງກັນເອິກໄວ້.** ສົງຄາມຂອງພວກເຮົາບໍ່ແມ່ນກ່ຽວກັບການຮູ້ຈັກຄວາມຈິງ; ແຕ່ພວກເຮົາຕ້ອງດຳເນີນຊີວິດໃນຄວາມຈິງນັ້ນ. ພວກເຮົາສາມາດຕໍ່ສູ້ກົນອຸບາຍຂອງມານຮ້າຍໄດ້ດ້ວຍການດຳເນີນຊີວິດໃນຄວາມຊອບທັມ.
- **ເອົາຄວາມພັ່ງພ້ອມເຣື່ອງຂ່າວປະເສີດມາຊຸບໃສ່ຕີນ.** ພວກເຮົາສາມາດຕັ້ງໝັ້ນຢູ່ ຫຼືກ້າວໄປຂ້າງໜ້າຍ້ອນຂ່າວປະເສີດແຫ່ງສັນຕິ

ສຸກ. ການຕັ້ງໝັ້ນຂອງເຮົາຈະປອດພັຍຍ້ອນສິ່ງທີ່ພຣະເຢຊູໄດ້ກະທຳເພື່ອເຮົາ. ພວກເຮົາຕັ້ງໝັ້ນຕ້ານທານມານຮ້າຍໂດຍການແບ່ງປັນຂ່າວປະເສີດ ໃນພຣະກຳລັງຂອງອົງພຣະຜູ້ເປັນເຈົ້າ.

- **ຍົກເອົາຄວາມເຊື່ອເປັນເຂນ.** ເຂນຂອງເຮົາປະກອບດ້ວຍຄວາມເຊື່ອຂອງເຮົາ-ການວາງໃຈໃນພຣະສັນຍາແລະຣິດອຳນາດຂອງພຣະເຈົ້າ. ຊີວິດຄຣິສະຕຽນແມ່ນນຶ່ງໃນຄວາມເຊື່ອຕັ້ງແຕ່ຕົ້ນຈົນຈົບ. *ດ້ວຍວ່າຊຶ່ງທ່ານທັງຫຼາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ (ອຟຊ 2:8); ໃນພຣະອົງນັ້ນພວກເຮົາຈຶ່ງມີໃຈກ້າ ແລະມີໂອກາດທີ່ຈະເຂົ້າເຝົ້າພຣະເຈົ້າໄດ້ດ້ວຍຄວາມໄວ້ໃຈເພາະຄວາມເຊື່ອໃນພຣະອົງ (ອຟຊ 3:12); ເພື່ອພຣະຄຣິດຈະຊົງຕັ້ງຢູ່ໃນໃຈຂອງທ່ານທັງຫຼາຍທາງຄວາມເຊື່ອ (3:17).* ແມ່ນຄວາມເຊື່ອທີ່ປ້ອງກັນເຮົາ. ເມື່ອພວກເຮົາເຊື່ອແລະວາງໃຈພຣະເຢຊູ, ລູກສອນໄຟຂອງມານຮ້າຍບໍ່ສາມາດທຳລາຍເຮົາໄດ້. ສັດຕຣູສາມາດຍິງລູກສອນແຫ່ງການຕົວະ, ການສົງສັຍ, ການກ່າວຫາ, ແລະການທົດລອງຂອງມັນໃສ່ເຮົາ, ຄວາມເຊື່ອໃນພຣະເຈົ້າຈະປ້ອງກັນເຮົາບໍ່ໃຫ້ຕົກເປັນເຫຍື່ອຂອງການໂຈມຕີແບບນັ້ນ.

*ພວກເຮົາຈະປະຕິບັດການສວມຍຸທພັນຄົບຊຸດຂອງພຣະເຈົ້າຢ່າງໃດ?*

## 3. ເອເຟໂຊ 6:17-18

*[17] ຈົ່ງເອົາຄວາມພົ້ນເປັນເຄື່ອງຕຽນປ້ອງກັນຫົວໄວ້ ແລະຈົ່ງຖືພຣະແສງຂອງພຣະວິນຍານ ຄືພຣະທຳຂອງພຣະເຈົ້າ. [18] ຈົ່ງອ້ອນວອນ-ແລະໄຫວ້ວອນທຸກຢ່າງຈົ່ງອ້ອນວອນໂດຍພຣະວິນຍານທຸກເວລາແລະຈົ່ງເຝົ້າລະວັງໃນການນັ້ນດ້ວຍຄວາມພຽນທຸກຢ່າງຈົ່ງອ້ອນວອນເພື່ອໄພ່ພົນທັງປວງຂອງພຣະເຈົ້າ.*

ເພື່ອໃຫ້ຄົບຍຸທພັນທີ່ພຣະເຈົ້າຈັດຫາໃຫ້ເຮົາ, ເພື່ອຊ່ວຍໃຫ້ພວກເຮົາຕັ້ງໝັ້ນຢູ່ໄດ້, ພວກເຮົາຕ້ອງໃຊ້ສ່ວນປະກອບເຫຼົ່ານີ້ເພີ່ມເຂົ້າ.

- **ໝວກແຫ່ງຄວາມພົ້ນ.** ພວກເຮົາຍັງຢືນຢັດຕໍ່ຕ້ານກົນອຸບາຍຂອງມານຮ້າຍ ດ້ວຍການຈົດຈຳຄວາມພົ້ນຂອງເຮົາ. ຊາຕານຫຼອກເຮົາໃຫ້ເຮົາສົງສັຍຄວາມພົ້ນຂອງເຮົາຫຼືຄວາມສິ້ນຫວັງຕໍ່ບາບຂອງເຮົາ. ແຕ່ພວກເຮົາໄດ້ເຂົ້າຮ່ວມເປັນນຶ່ງກັບພຣະຄຣິດ ແລະໄດ້ຮັບພຣະພອນທຸກປະການຝ່າຍວິນຍານໃນພຣະອົງແລ້ວ(ອຟຊ 1:3). ພວກເຮົາຕໍ່ສູ້ການທົດລອງດ້ວຍການຈື່ຈຳຄວາມພົ້ນອັນໃຫຍ່ຫຼວງທີ່ພຣະເຈົ້າໄດ້ທຳສຳເຣັດໃຫ້ແກ່ເຮົາໃນພຣະຄຣິດນັ້ນ.
- **ພຣະແສງແຫ່ງພຣະວິນຍານ.** ພຣະເຈົ້າບໍ່ພຽງແຕ່ປະທານອາວຸດປ້ອງກັນຕົວໃຫ້ເຮົາເທົ່ານັ້ນ; ພວກເຮົາຍັງມີອາວຸດຕໍ່ຕ້ານອີກດ້ວຍ: ພຣະແສງແຫ່ງພຣະວິນຍານ-ຊຶ່ງແມ່ນພຣະທັມຂອງພຣະເຈົ້າ." ອາວຸດນີ້ເປັນທັງອາວຸດຕໍ່ຕ້ານແລະປ້ອງກັນຕົວ. ພວກເຮົາພັກພິງໃນພຣະສັນຍາໃນພຣະທັມຂອງພຣະເຈົ້າເພື່ອປ້ອງກັນເຮົາ, ແລະນຳໃຊ້ພຣະທັມໃນສະຖານະການສະເພາະເພື່ອຕ້ານທານການໂຈມຕີຂອງສັດຕູແລະເຮັດໃຫ້ມັນຫຼົບໜີໄປ.

ແມ້ກະທັ້ງເວລາເຮົາກ່າວຄວາມຈິງພຣະຄັມພີແກ່ເຮົາເອງ, ພວກເຮົາຍັງຕ້ອງຊ່ວຍເຫຼືອຊຶ່ງກັນແລະກັນອີກ. ຊີວິດຄຣິສະຕຽນບໍ່ໝາຍຄວາມວ່າຈະຢູ່ຜູ້ດຽວ, ແລະໃນເມື່ອຊີວິດຄຣິສະຕຽນແມ່ນສົງຄາມ, ບໍ່ໝາຍຄວາມວ່າພວກເຮົາຈະສູ້ຄົນດຽວ. ພວກເຮົາແມ່ນກຸ່ມອ້າຍເອື້ອຍນ້ອງຊ່ວຍກັນສູ້ສັດຕູດ້ວຍພຣະທັມພຣະເຈົ້າ.

ສົງຄາມຝ່າຍວິນຍານນີ້ຮຽກຮ້ອງການອະທິຖານເໝືອນກັນ. ການອະທິຖານບໍ່ແມ່ນສ່ວນນຶ່ງຂອງອາວຸດ, ແຕ່ມັນເສີມພະລັງອາວຸດ. ສັງເກດເບິ່ງວ່າພວກເຮົາຕ້ອງອະທິຖານຢ່າງໃດ:

- **ທຸກເວລາ.** ການອະທິຖານແຕ່ລະວັນຂອງເຮົາເປີດເຜີຍໃຫ້ເຫັນການເພິ່ງພາພຣະເຈົ້າຂອງເຮົາ. ພວກເຮົາຕ້ອງຮັກສາການຕິດຕໍ່ກັບພຣະເຈົ້າຢ່າງຕໍ່ເນື່ອງໃນພຣະອົງ, ສແວງຫາພຣະອົງໃນຄວາມໃນສົງຄາມທີ່ຮ້ອນແຮງ. "ຈົ່ງອ້ອນວອນຢູ່ບໍ່ຂາດ" (1 ທສນ 5:17).

- **ກັບການອ້ອນວອນແລະການໄຫວ້ວອນ.** ການເພິ່ງພາພຣະເຈົ້າໝາຍຄວາມວ່າເຮົານຳເອົາຄວາມຕ້ອງການແລະການທູນຂໍທຸກຢ່າງມານອບໃຫ້ພຣະອົງ.
- **ຈົ່ງເຝົ້າລະວັງແລະອົດທົນ.** ພວກເຮົາບໍ່ເຫງົານອນເວລາປະຈຳການ! ພວກເຮົາຕ້ອງເຝົ້າລະວັງຢູ່ສເມີ. ທ່ານໂປໂລໃຫ້ຕົວຢ່າງທີ່ດີວ່າຈະອະທິຖານຢ່າງໃດ ເພື່ອເຮົາແລະຄົນອື່ນ ໃນການອະທິຖານທີ່ເພິ່ນໄດ້ອະທິຖານເພື່ອຊາວເອເຟໂຊ.

14 ເພາະເຫດນີ້ຂ້າພະເຈົ້າຈຶ່ງຄູ້ເຂົ່າລົງຕໍ່ພຣະພັກພຣະບິດາ. 15 (ຄຳວ່າບິດາຂອງທຸກຄອບຄົວໃນສວັນແລະທີ່ແຜ່ນດິນໂລກກໍໄດ້ຊື່ມາ
ຈາກພຣະບິດາ). 16 ຂໍໃຫ້ພຣະອົງຊົງໂຜດປະທານກຳລັງອັນເຂັ້ມແຂງຝ່າຍຈິດໃຈແກ່ທ່ານທັງຫລາຍຕາມຄວາມອຸດົມສົມບູນແຫ່ງພຣະ
ສງ່າຣາສີຂອງພຣະອົງໂດຍເດດພຣະວິນຍານຂອງພຣະອົງ. 17 ເພື່ອພຣະຄຣິດຈະຊົງຕັ້ງຢູ່ໃນໃຈຂອງທ່ານທັງຫລາຍທາງຄວາມເຊື່ອ
ເພື່ອວ່າ, ເມື່ອພວກທ່ານໄດ້ວາງຮາກລົງຢ່າງໝັ້ນຄົງໃນຄວາມຮັກແລ້ວ, 18 ພວກທ່ານກໍຈະມີຄວາມສາມາດເຂົ້າໃຈ, ພ້ອມກັບໄພ່ພົນ
ທັງປວງຂອງພຣະອົງ, ເຖິງຄວາມກວ້າງ, ຄວາມຍາວ, ຄວາມສູງແລະຄວາມເລິກ. 19 ທັງຈະຮູ້ຈັກຄວາມຮັກຂອງອົງພຣະຄຣິດຊຶ່ງ
ເກີນຄວາມຮູ້ ເພື່ອທ່ານທັງຫລາຍຈະໄດ້ຮັບຄວາມເຕັມບໍລິບູນຂອງພຣະເຈົ້າທຸກປະການ. 20 ຂໍໃຫ້ພຣະກຽດຈົ່ງມີແກ່ພຣະອົງຜູ້ຊົງຣິດ
ສາມາດກະທຳນອກເໜືອສາລະພັດ ຫລືຊົງສາມາດກະທຳເໜືອກວ່າທີ່ພວກເຮົາຈະຂໍຫລືຄຶດໄດ້ ຕາມຣິດອຳນາດທີ່ກຳລັງດຳເນີນຢູ່
ພາຍໃນຕົວເຮົາທັງຫລາຍ. 21 ຈົ່ງຖວາຍພຣະກຽດແກ່ພຣະອົງໃນຄຣິສຕະຈັກ ແລະໃນພຣະເຢຊູຄຣິດທຸກຊົ່ວອາຍຸຄົນຕລອດໄປເປັນ-
ນິດ ອາແມນ (ອຟຊ 3:14-21).

*ກຸ່ມຂອງພວກເຮົາຈະຊ່ວຍກັນຢ່າງໃດໃນສົງຄາມຝ່າຍວິນຍານ?*

## ນຳໃຊ້ໃນຊີວິດ

ພຣະເຈົ້າຈັດຕຽມພວກເຮົາໃຫ້ຢືນພື້ນທີ່ຂອງເຮົາຕໍ່ຕ້ານກັບການລໍ້ລວງໃຈ. ຈົ່ງເລືອກນຶ່ງໃນການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ລົງໄປນີ້:

- **ຈົ່ງຢືນໝັ້ນ.** ໂດຍການອະທິຖານ, ຈົ່ງໃຫ້ຄຳໝັ້ນສັນຍາຕົວທ່ານເອງໃໝ່ເພື່ອຢຶດໝັ້ນໃນພຣະກຳລັງຂອງອົງພຣະຜູ້ເປັນເຈົ້າໃນສົງຄາມຝ່າຍວິນຍານ.
- **ຈົ່ງບົ່ງບອກ.** ຈົ່ງເຮັດບັນຊີການທົດລອງທີ່ຊາຕານມັກໃຊ້ເພື່ອຕໍ່ສູ້ທ່ານ. ຈົ່ງບົ່ງບອກບົດພຣະຄັມພີທີ່ຈະຊ່ວຍທ່ານເຮັດສົງຄາມກັບການທົດລອງເຫຼົ່ານີ້ໂດຍສະເພາະ. ຕລອດສາມສີ່ທິດຕໍ່ໄປ, ຈົ່ງເອົາຂໍ້ພຣະຄັມພີເຫຼົ່ານີ້ໄປທ່ອງໃຫ້ຂຶ້ນໃຈ.
- **ຈົ່ງຢືນສູ້ນຳກັນ.** ແມ້ແຕ່ທະຫານໂຣມັນຍັງຢືນທັບຫຼັງໃສ່ກັນໃນສົງຄາມ, ພວກທ່ານກໍສາມາດເຮັດເຊັ່ນດຽວກັນກັບຜູ້ເຊື່ອຄົນອື່ນໆ. ຈົ່ງສົນທະນາຫາຊ່ອງທາງອູ້ມຊູແລະໃຫ້ກຳລັງໃຈກັນໃນສົງຄາມຝ່າຍວິນຍານທີ່ທ່ານກຳລັງປະເຊີນຢູ່.

ຊີວິດຄຣິສະຕຽນແມ່ນການຕໍ່ສູ້ແທ້ຈິງ. ພວກເຮົາຈົ່ງມີກຳລັງຂຶ້ນໃນພຣະກຳລັງຂອງພຣະເຈົ້າ, ເພື່ອສວມຍຸທພັນຂອງພຣະເຈົ້າ, ແລະຕໍ່ຕ້ານກັບກົນອຸບາຍຂອງມານ. ພວກເຮົາຕຽມພ້ອມສຳລັບສົງຄາມບໍ່?

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**